# 17

ການຕັດສິນໃຈ




ເຊົ້າມື້ໜຶ່ງ, ວິຊາ ແລະ ຈິນດາກຳລັງຊຽນເລື່ອງກ່ຽວກັບອາຊີບທີ່ພວກເຂົາໄຝ່ຝັນຢາກເປັນ.
ຂ້ອຍຄວນເປັນທ່ານໝໍ ຫຼື ທະນາຍຄວາມ?


ຈິນດາ ຂ້ອຍບໍ່ຮູ້ຈະເລືອກອັນໃດ.


ການຕັດສິນໃຈເລືອກ ອັນໃດອັນໜຶ່ງເປັນເລື່ອງທີ່ຍາກ ມັນບໍ່ງ່າຍສຳລັບຂ້ອຍຄືກັນ.


ຂ້ອຍມີໝູ່ຜູ້ໜຶ່ງຊື່ວ່າ ສຸພັດຕາ. ຂ້ອຍມັກຈະເຮັດຕາມໃນສິ່ງທີ່ລາວເຮັດ.



ຂ້ອຍກິນເຂົ້າເຊົ້າຄືກັບທີ່ລາວກິນ.
ຂ້ອຍໄປໂຮງຮຽນທາງ ດຽວກັບລາວ.
ຂ້ອຍຫຼິ້ນທຸກຢ່າງຄືທີ່ລາວຫຼິ້ນໃນເວລາພັກ ຜ່ອນ.
ສຸພັດຕາ ຊ່ວຍຂ້ອຍ ເລືອກວຽກບ້ານ ໂຕໃດທີ່ຈະ ເຮັດກ່ອນ.


ມື້ໜຶ່ງ....
ເປັນຫຍັງເຈົ້າຄືບໍ່ປີນ ຂຶ້ນມາຄືກັນ ຈິນດາ?
ອົາ!!!!
ຂາຂອງຂ້ອຍ............
ຂ້ອຍຫວັງວ່າ ສຸພັດຕາຈະບໍ່ເປັນຫຍັງຫຼາຍ.
ເມື່ອສຸພັດຕາບໍ່ມາ. ຂ້ອຍຢ້ານທີ່ຈະໄປໂຮງຮຽນ ຄົນດຽວ.
ແມ່! ສຸພັດຕາບອກ ລູກວ່າຈະເຮັດແນວໃດ ຖ້າບໍ່ມີລາວ, ລູກຈະຕັດ ສິນໃຈແນວໃດດີ?


ລູກຮູ້ບໍ? ເມື່ອລູກໃຫຍ່ຂຶ້ນ, ຍິ່ງມີການຕັດສິນໃຈທີ່ໃຫຍ່ຂຶ້ນ ລູກຕ້ອງຮຽນຕັດສິນໃຈດ້ວຍຕົນເອງເປັນສິ່ງທີ່ດີທີ່ສຸດ.
ມະຫາວິທະຍາໄລ


ລູກເຄີຍໃຫ້ຄົນອື່ນຕັດສິນໃຈແທນລູກ.
ລູກສາມາດຂໍຄຳແນະນຳຈາກຜູ້ອື່ນ ແລະ ຂໍສະຕິປັນຍາຈາກພຣະເຈົ້າ. ພຣະອົງຈະຊ່ວຍລູກໃນການຕັດສິນໃຈທີ່ຖືກຕ້ອງ.


ຄືນນັ້ນ ຂ້ອຍຈຶ່ງເລືອກວິຊາຮຽນທີ່ເປັນວິຊາຫຼັກ.
ສັງຄົມສຶກສາ
ຄະນິດສາດ
ຂ້ອຍຈະເຮັດຕາມທີ່ແມ່ຂອງຂ້ອຍແນະນຳ.
ພຣະເຈົ້າ, ຂໍໂຜດ ຊ່ວຍຂ້ານ້ອຍດ້ວຍ.
ຕາມຕາຕະລາງ, ຂ້ອຍຈະຮຽນວິຊາ ສັງຄົມສຶກສາມື້ອື່ນ ແລະຈະສອບເສັງວິຊາຄະນິດສາດ ໃນວັນສຸກໜ້າ.
ໝາຍຄວາມວ່າຂ້ອຍຈະຕ້ອງຮຽນວິຊາສັງຄົມສຶກສາກ່ອນ.


ມື້ຕໍ່ມາ, ຂ້ອຍເລີ່ມຮຽນຮູ້ໃນການຕັດສິນໃຈດ້ວຍຕົນເອງຫຼາຍຂຶ້ນ.
ຂໍເຝີ ໃຫ້ຂ້ອຍແດ່.
ຂ້ອຍເລືອກທາງທີ່ຈະໄປໂຮງຮຽນເອງ.
ຂ້ອຍເລືອກທີ່ຈະຫຼິ້ນໃນສິ່ງທີ່ຢາກຫຼິ້ນ
ຊ່ວງເວລາພັກຜ່ອນ.
ຂ້ອຍກໍຍັງເລືອກວຽກບ້ານໂຕໃດ ທີ່ຈະຕ້ອງແກ້ກ່ອນ.


ສອງສາມມື້ຕໍ່ມາ ຂ້ອຍໄດ້ໄປຢາມ ສຸພັດຕາ.
ໄປກິນຫຍັງນຳກັນເນາະ.
ຂໍເຂົ້າປຽກສອງຖ້ວຍແດ່.
ສຸພັດຕາ, ຂ້ອຍຢາກໄດ້ເຝີ.
ຂ້ອຍຮຽນຮູ້ທີ່ຈະຕັດສິນໃຈດ້ວຍຕົນເອງ ຕອນທີ່ເຈົ້າບໍ່ຢູ່. ແມ່ຂອງຂ້ອຍຊ່ວຍ ຂ້ອຍ,ຄືກັນ. ດຽວນີ້ຂ້ອຍມີ ຄວາມໝັ້ນໃຈຫຼາຍຂຶ້ນແລ້ວ.
ດັ່ງນັ້ນ, ວິຊ້າ ເມື່ອເຈົ້າຕັດສິນໃຈຍາກ, ຈົ່ງຂໍຄຳແນະນຳຈາກຜູ້ອື່ນ, ແລະ ຂໍໃຫ້ພຣະເຈົ້າໃຫ້ ເຈົ້າມີສະຕິປັນຍາທີ່ ຈະຕັດສິນໃຈຢ່າງສະຫຼາດ.
ພຣະເຈົ້າ, ຂໍພຣະອົງຊ່ວຍໃຫ້ວິຊ້າມີສະຕິປັນຍາ ແລະ ນຳພາລາວໃນການຕັດສິນໃຈດ້ວຍ.

# ກິດຈະກຳ.

ລອງຄິດເບິ່ງວ່າ ຖ້າເຈົ້າຢາກໄດ້ລົດຖີບລາຄາ 500,000. ກີບ. ແລ້ວພໍ່ແມ່ຂອງເຈົ້າກໍບໍ່ຊື້ໃຫ້. ແລະເຈົ້າກໍບໍ່ມີເງິນ. ເຈົ້າຈະເຮັດແນວໃດ? ຈົ່ງອ່ານແລະ ສົນທະນາ ໃນແຕ່ລະຂັ້ນຕອນ,ແລະ ຕັດສິນໃຈກັບໝູ່ຂອງເຈົ້າ.

| | |
|---|---|
| ຂັ້ນຕອນທີ 1:<br>ເປັນຫຍັງເຈົ້າຈຶ່ງຢາກໄດ້ລົດຖີບ?<br>ຈົ່ງສົນທະນາກ່ຽວກັບສິ່ງທີ່ດີ ແລະ ສິ່ງທີ່ບໍ່ດີໃນການເປັນເຈົ້າຂອງລົດຖີບ. | ຂັ້ນຕອນທີ 2: ຈົ່ງເວົ້າເຖິງບັນຫາ.<br>ມີທາງໃດແດ່ທີ່ສາມາດຫາເງິນໄດ້?<br>ຈົ່ງສົນທະນາກັບໝູ່ຂອງເຈົ້າ ແລະ ຊອກຫາທາງແກ້ໄຂບັນຫາຈັກ 3 ທາງ. |
| ຂັ້ນຕອນທີ 3 ຈົ່ງຄິດກ່ຽວກັບຜົນທີ່ຕາມມາໃນແຕ່ລະທາງແກ້ໄຂວ່າເປັນແນວໃດ. | ຂັ້ນຕອນທີ 4 ຈົ່ງຕັດສິນໃຈຮ່ວມກັບໝູ່ຂອງເຈົ້າ.<br>ເຈົ້າມີທາງແກ້ໄຂທີ່ດີບໍ?<br>ເປັນຫຍັງ? ຜູ້ໃຫຍ່ທີ່ເຈົ້າຈະລົມນຳ ກ່ອນທີ່ຈະຕັດສິນໃຈນັ້ນແມ່ນໃຜ? |



## ຄຳຖາມສົນທະນາ

ການຕັດສິນໃຈນ້ອຍໆທີ່ເຈົ້າເຮັດແຕ່ລະມື້ແມ່ນຫຍັງ? ມີການຕັດສິນໃຈໃດທີ່ຍາກສຳລັບເຈົ້າ? ຈົ່ງອະທິຖານຕໍ່ພຣະເຈົ້າຮ່ວມກັນ ເພື່ອພຣະອົງຈະຊ່ວຍເຈົ້າຄິດແລະຕັດສິນໃຈຢ່າງສະຫຼາດ.

ຈົ່ງແບ່ງປັນກັບພີ່ນ້ອງຂອງເຈົ້າ ກ່ຽວກັບການຕັດສິນໃຈຄັ້ງສຳຄັນຂອງເຈົ້າ.





ແຕ່ຖ້າຄົນໃດໃນພວກເຈົ້າຂາດສະຕິປັນຍາ ກໍໃຫ້ຜູ້ນັ້ນທູນຂໍຈາກພຣະເຈົ້າຜູ້ຊົງໂຜດປະທານໃຫ້ແກ່ຄົນທັງປວງດ້ວຍຄວາມເມດຕາ ບໍ່ຊົງກ່າວຕິ ແລະຜູ້ນັ້ນກໍຈະໄດ້ຮັບສິ່ງທີ່ທູນຂໍ.



បងធំកម្ពុជា
ALONGSIDERS CAMBODIA

www.alongsiders.org
Email: serey@alongsiders.org
: